ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ข่าว NEWS
ພະແນກຄົ້ນຄວ້າຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ເຜີຍແຜ່-ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢູ່ອົງຄະນະພັກທະນາຄານແຫ່ງ ສປປ ລາວ

ໂດຍປະຕິບັດຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ແລະ ຄຳແນະນຳຂອງຄະນະໂຄສະນາອົບຮົມ ສູນກາງພັກ ໃນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ໃນລະ ຫວ່າງວັນທີ 11-12 ມິຖຸນາ 2026 ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ຄພ.ທຫລ) ໄດ້ຈັດຕັ້ງກອງປະຊຸມ ເຜີຍແຜ່-ເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຢູ່ສະໂມສອນໃຫຍ່ສະຖາບັນການທະນາຄານ ໂດຍ ພາຍໃຕ້ການນຳພາຂອງ ສະຫາຍ ນ. ບຸນຄຳ ວໍລະຈິດ ຄະນະເລຂາທິການສູນກາງພັກ, ເລຂາ ຄພ.ທຫລ, ມີບັນດາ ສະຫາຍ ຄະນະບໍລິຫານງານພັກ ທຫລ, ຄະນະໜ່ວຍພັກ-ຄະນະທຳມະຖານ, ຄະນະກົມ, ຄະນະຜູ້ອຳນວຍການທະ ນາຄານທຸລະກິດ ພ້ອມດ້ວຍພະນັກງານຫຼັກແຫຼ່ງນຳພາ ທີ່ຂຶ້ນກັບອົງ ຄພ.ທຫລ ເຂົ້າຮ່ວມຫຼາຍກ່ວາ 200 ສະ ຫາຍ.

ກອງປະຊຸມໄດ້ນຳເອົາເອກະສານສຳຄັນຂອງພັກ 4 ສະບັບ ເພື່ອເຜີຍແຜ່ໃຫ້ຜູ້ເຂົ້າຮ່ວມໄດ້ເຊື່ອມຊຶມກຳແໜ້ນຄື: ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ບົດຄວາມເຫັນຊີ້ນຳຂອງເລຂາທິການໃຫຍ່, ປະທານປະເທດ ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.

ຫຼັງຈາກນັ້ນ, ໄດ້ມີການແບ່ງກຸ່ມເປັນ 7 ກຸ່ມ ຕາມສາຍ ເພື່ອຄົ້ນຄວ້າວຽກງານວິຊາສະເພາະຕິດພັນກັບເນື້ອໃນເອກະສານທີ່ໄດ້ຮັບການເຜີຍແຜ່ເຊື່ອມຊຶມ ໂດຍລົງເລິກວຽກງານວິຊາສະເພາະຂອງຂະແໜງທະນາຄານ ເພື່ອໃຫ້ມີຄວາມເຂົ້າໃຈທີ່ເປັນເອກະພາບ, ເລິກເຊິ່ງ ຈາກນັ້ນ ຈາງໜ້າແຕ່ລະກຸ່ມໄດ້ຂຶ້ນລາຍງານຜົນຂອງການຄົ້ນຄ້ວາ ໂດຍສະເພາະແມ່ນທິດທາງ-ແຜນການໃນການພັນຂະຫຍາຍແຕ່ລະວຽກ ເຂົ້າສູ່ຂອດຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ ແລະ ມີປະສິດທິພາບສູງ.

ພ້ອມກັນນັ້ນ, ກອງປະຊຸມ ຍັງໄດ້ມີພິທີປະດັບຫຼຽນກາລະນຶກ ວັນສະຖາປະນາ ສປປ ລາວ ຄົບຮອບ 50 ປີ ໃຫ້ພະນັກງານຂະແໜງທະນາຄານ ທີ່ໄດ້ປະກອບສ່ວນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນໄລຍະຜ່ານມາ ຊຶ່ງເປົ້າໝາຍທີ່ໄດ້ຮັບຫຼຽນດັ່ງກ່າວມີຈຳນວນທັງໝົດ 1,131 ຄົນ, ໃນນີ້ ເປັນພະນັກງານປະຈຳ ການ946 ຄົນ ແລະ ພະນັກງານອາວຸໂສບຳນານ 185 ຄົນ.

ໃນຕອນທ້າຍຂອງກອງປະຊຸມ, ສະຫາຍ ນ. ບຸນຄໍາ ວໍລະຈິດ ຍັງໄດ້ໃຫ້ກຽດມີຄໍາເຫັນຊີ້ນໍາຕໍ່ກອງປະຊຸມ ເພື່ອເປັນເຂັມຊີ້ທິດເຍືອງທາງໃນການເຄື່ອນໄຫວວຽກງານຂອງຂະແໜງທະນາຄານໃນຕໍ່ໜ້າ ເພື່ອເຮັດໃຫ້ ຄພ.ທ ຫລ ສາມາດສືບຕໍ່ນໍາພາ-ຊີ້ນໍາການຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ແລະ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X ກໍ່ຄືມະຕິກອງປະຊຸມໃຫຍ່ ຄັ້ງທີ V ຂອງອົງ ຄພ.ທຫລ ໃຫ້ບັນລຸຜົນ ສໍາເລັດຕາມແຜນການທີ່ວາງໄວ້ ຢ່າງຈົບງາມ.

ຂ່າວ ແລະ ພາບ: ຫ້ອງການ ທຫລ

ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ